ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----====0000====-----

ກະຊວງ ກະສິກຳ ແລະ ປ່າໄມ້

ເລກທີ 0535 /ກປ.2001.

ວຽງຈັນ, ວັນທີ 18 JUN 2001

# ລະບຽບການ
# ວ່າດ້ວຍ ການຄຸ້ມຄອງ ປ່າໄມ້ບ້ານ

- ອີງຕາມ ກົດໝາຍປ່າໄມ້ ສະບັບ ເລກທີ 01 - 96, ລົງວັນທີ 11 ຕຸລາ 1996.
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບ ເລກທີ 198/ ນຍ,ລົງວັນທີ 15 ກໍລະກົດ 1999 ວ່າດ້ວຍ ການຈັດຕັ້ງ ປະຕິບັດ ກົດໝາຍ ປ່າໄມ້.
- ອີງຕາມ ດຳລັດ ຂອງນາຍົກ ລັດຖະມົນຕີ ສະບັບເລກທີ102/ ນຍ, ລົງວັນທີ 05 ກໍລະກົດ1993, ວ່າດ້ວຍ ການຈັດຕັ້ງ ແລະ ບໍລິຫານບ້ານ.
- ອີງຕາມ ຄຳສັ່ງແນະນຳ ຂອງ ນາຍົກລັດຖະມົນຕີ ສະບັບເລກທີ 01 /ນຍ,ລົງວັນທີ 11 ມິນາ 2000, ວ່າດ້ວຍ ການສ້າງ ແຂວງເປັນຫົວໜ່ວຍຍຸດທະສາດ, ເມືອງເປັນຫົວໜ່ວຍແຜນການ ງົບປະມານ ແລະ ສ້າງບ້ານ ເປັນຫົວໜ່ວຍພື້ນຖານ ຈັດຕັ້ງປະຕິບັດ.

ເພື່ອ ເຮັດໃຫ້ ຊັບພະຍາກອນປ່າໄມ້ ທີ່ມີໃນປະຈຸບັນ ໄດ້ຮັບການຄຸ້ມຄອງ, ປົກປັກຮັກສາ ຟື້ນຟູບູລະນະ, ປູກຂະຫຍາຍ ໃຫ້ອຸດົມຮັ່ງມີ ແລະ ນຳໃຊ້ ຢ່າງຍືນນານ ຕະຫລອດໄປ ພ້ອມທັງ ມີ ການກະຕຸກຊຸກຍູ້ ໃນການປະກອບສ່ວນ ຂອງ ປະຊາຊົນ ແລະ ການຈັດຕັ້ງຂອງບ້ານ ເຂົ້າໃນ ການປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ຢ່າງຕັ້ງໜ້າ ທັງຖືກຕ້ອງ ແລະ ສອດຄ່ອງກັບແນວທາງ ນະໂຍບາຍ ຂອງ ລັດຖະບານ ແລະ ເນື້ອໃນຈິດໃຈ ຂອງ ກົດໝາຍປ່າໄມ້.

ລັດຖະມົນຕີ ວ່າການ ກະຊວງ ກະສິກຳ ແລະ ປ່າໄມ້ ອອກລະບຽບການ :

## <u>ໝວດທີ 1</u>
## ບົດບັນຍັດທົ່ວໄປ

**ມາດຕາ 1 : ຈຸດປະສົງ**

ຈຸດປະສົງ ຂອງ ລະບຽບການ ວ່າດ້ວຍ ການຄຸ້ມຄອງປ່າໄມ້ບ້ານ ສະບັບນີ້ ແນໃສ່ເພື່ອ

1.1 ສົ່ງເສີມ ໃຫ້ ປະຊາຊົນ ບັນດາບ້ານ ທີ່ຕັ້ງຖິ່ນຖານ ແລະ ເຄີຍດຳລົງຊີວິດ ຕິດພັນກັບ ປ່າໄມ້ ໄດ້ເປັນເຈົ້າການ ແລະ ມີສ່ວນຮ່ວມ ໃນການຄຸ້ມຄອງ,ປົກປັກຮັກສາ, ຟື້ນຟູບູລະນະ, ປູກ ຂະຫຍາຍປ່າ ແລະ ນຳໃຊ້ປະໂຫຍດ ຈາກຊັບພະຍາກອນປ່າໄມ້ ຢ່າງຍືນນານ, ສ້າງຈິດ ສຳນຶກໃຫ້ ປະຊາຊົນ ພາຍໃນບ້ານ ມີຄວາມຮັບຮູ້ວ່າ ຕົນເອງເປັນຕົວແທນທີ່ແທ້ຈິງ ໃຫ້ລັດ ໃນ ການປົກປັກຮັກສາ ຊັບພະຍາກອນປ່າໄມ້ ທີ່ນອນຢູ່ໃນຂອບເຂດ ຄວາມຮັບຜິດຊອບ ຂອງບ້ານຕົນ. ທັງນີ້ ກໍເພື່ອເຮັດໃຫ້ ຊັບພະຍາກອນປ່າໄມ້ ແລະ ທີ່ດິນປ່າໄມ້ ໃນຂອບເຂດ ຂອງບ້ານ ເປັນ ແຫຼ່ງທຳມາຫາກິນ ຂອງ ປະຊາຊົນ ໂດຍບໍ່ມີ ວັນຍົກແຫ້ງ ເປັນຈັກເທື່ອ.

1.2 ຮັບຮອງ ສິດເປັນເຈົ້າ ໃນການຊົມໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ ຂອງບ້ານ ຕາມ ປະເພນີ ທີ່ເຄີຍໄດ້ປະຕິບັດກັນມາ ແຕ່ບູຮານນະການ ໂດຍສອດຄ່ອງກັບລະບຽບກົດໝາຍ ທີ່ລັດ ວາງອອກ.

1.3 ຫລຸດຜ່ອນ ການທຳລາຍ ຊັບພະຍາກອນປ່າໄມ້ ກ້າວໄປເຖິງບ່ອນ ການຢຸດຕິ ການຖາງປ່າ ເຮັດໄຮ່, ການຂຸດຄົ້ນໄມ້ ຢ່າງຊະຊາຍ ພ້ອມທັງປົກປັກຮັກສາ ສິ່ງແວດລ້ອມ, ພັດທະນາ ຊີວິດການເປັນຢູ່ ຂອງ ປະຊາຊົນ ບັນດາເຜົ່າ ໃຫ້ດີຂຶ້ນ ເທື່ອລະກ້າວ.

## ມາດຕາ 2 : ນິຍາມ

<u>ປ່າໄມ້ບ້ານ</u> : ໝາຍເຖິງ ເນື້ອທີ່ປ່າໄມ້ໃດໜຶ່ງ ຊຶ່ງຖືກກຳນົດຂຶ້ນ ພາຍຫລັງ ທີ່ມີ ການມອບ ດິນ - ມອບປ່າແລ້ວ ໂດຍລັດໄດ້ມອບໃຫ້ບ້ານ ເປັນຜູ້ຄຸ້ມຄອງ, ປົກປັກຮັກສາ, ນຳໃຊ້ ຢ່າງ ມີແຜນການ ເພື່ອພັດທະນາປ່າໄມ້ບ້ານ ໃຫ້ມີ ຄວາມອຸດົມສົມບູນ ຕະຫຼອດໄປ. ໃນນີ້ ບາງບ້ານ ມີ 2-3 ຫຼື 5 ປະເພດປ່າ ແລະ ບາງບ້ານ ມີແຕ່ປ່າ ປະເພດດຽວ ຊຶ່ງແລ້ວແຕ່ ສະພາບຄວາມເປັນຈິງ ຂອງ ປະເພດປ່າໄມ້ ທີ່ມີຢູ່ໃນຂອບເຂດບ້ານນັ້ນໆ ຄື: ປ່າປ້ອງກັນ, ປ່າສະຫງວນ, ປ່າຜະລິດ, ປ່າຟື້ນຟູ, ປ່າຊຸດໂຊມ ຫຼື ທີ່ດິນປອກໂລ້ນ.

<u>ປ່າຜະລິດຂອງບ້ານ</u> : ແມ່ນ ປ່າໄມ້ ແລະ ທີ່ດິນປ່າໄມ້ ຊຶ່ງຖືກຈັດແບ່ງ ເພື່ອການຊົມໃຊ້ ຊັບພະຍາກອນປ່າໄມ້ ຕາມປະເພນີ ດັ່ງທີ່ໄດ້ກຳນົດໄວ້ ໃນມາດຕາ28 ຂອງກົດໝາຍປ່າໄມ້ ຊຶ່ງອະນຸຍາດໃຫ້ຂຸດຄົ້ນໄມ້ ປະເພດ ບໍ່ຫວງຫ້າມ ແລະ ເກັບກູ້ ຜະລິດຕະພົນປ່າໄມ້ ເພື່ອ ໃຊ້ສອຍ ພາຍໃນຄອບຄົວ ແນໃສ່ ຮັບປະກັນ ການແກ້ໄຂ ຊີວິດການເປັນຢູ່ ຂອງ ປະຊາຊົນ ບັນດາເຜົ່າ ຢ່າງເປັນປົກກະຕິ ແລະ ຍືນນານ.

ໜ່ວຍງານປ່າໄມ້ບ້ານ : ແມ່ນການຈັດຕັ້ງ ທີ່ນອນຢູ່ໃນ ຄະນະກຳມະການເສດຖະກິດບ້ານ ໂດຍແມ່ນ ອຳນາດການປົກຄອງບ້ານ, ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ ເປັນຜູ້ຮັບຮອງເອົາ ເພື່ອນຳສະເໜີ ຫາ ເຈົ້າເມືອງ ອະນຸມັດ ໃຫ້ເປັນ ຜູ້ຄຸ້ມຄອງ ປ່າໄມ້ບ້ານ ຊຶ່ງມີໜ້າທີ່ ຊ່ວຍວຽກຄະນະກຳມະການ ເສດຖະກິດບ້ານ ກ່ຽວກັບ ວຽກງານ ປ່າໄມ້.

## ໝວດທີ 2

## ການກຳນົດ ປະເພດປ່າ ແລະ ການສ້າງແຜນຈັດສັນ ປ່າໄມ້ບ້ານ

### ມາດຕາ 3 : ການກຳນົດ ປະເພດປ່າໄມ້ບ້ານ

ປະເພດປ່າໄມ້ ທີ່ກຳນົດໃຫ້ເປັນປ່າໄມ້ບ້ານ ປະກອບດ້ວຍ 5 ປະເພດປ່າ ຄື : ປ່າປ້ອງກັນ, ປ່າສະຫງວນ, ປ່າຜະລິດ, ປ່າຟື້ນຟູ ແລະ ປ່າຊຸດໂຊມ ຫລື ທີ່ດິນປອກໂລ້ນ. ສ່ວນເຂດເນື້ອທີ່ປ່າໄມ້ ທີ່ລັດໄດ້ກຳນົດ ໃຫ້ນຳໃຊ້ ເພື່ອຈຸດປະສົງ ທາງດ້ານ ຍຸດທະສາດ ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ເຂດເນື້ອທີ່ ປ່າໄມ້ ເພື່ອການຄົ້ນຄວ້າ ທົດລອງ ທາງດ້ານ ວິທະຍາສາດ ແມ່ນ ບໍ່ສາມາດ ທີ່ຈະກຳນົດໃຫ້ເປັນ ເຂດປ່າໄມ້ບ້ານໄດ້.

### ມາດຕາ 4 : ຂັ້ນຕອນ ການດຳເນີນ ການກຳນົດ ພື້ນທີ່ປ່າໄມ້ບ້ານ

ການກຳນົດພື້ນທີ່ປ່າໄມ້ ແລະທີ່ດິນປ່າໄມ້ໃຫ້ເປັນປ່າໄມ້ບ້ານ ຕ້ອງໄດ້ດຳເນີນຕາມຂັ້ນຕອນ ທີ່ໄດ້ກຳນົດໄວ້ ຢູ່ໃນບົດແນະນຳ ຂອງກະຊວງ ກະສິກຳ ແລະ ປ່າໄມ້ ວ່າດ້ວຍການມອບດິນ - ມອບປ່າ ເພື່ອຄຸ້ມຄອງ ແລະ ນຳໃຊ້ ສະບັບເລກທີ 0822/ກປ, ລົງວັນທີ 02 ສິງຫາ 1996 ແລະ ສອດຄ່ອງ ກັບ ຈຸດພິເສດ ຂອງບ້ານ.

### ມາດຕາ 5 : ການຈັດສັນ ເນື້ອທີ່ປ່າໄມ້ບ້ານ

ການຈັດສັນ ປ່າໄມ້ບ້ານ ຕ້ອງໄດ້ສ້າງເປັນ ແຜນການຈັດສັນ ເປັນແຕ່ລະ ໄລຍະ ຄື : ແຜນການ ຈັດສັນ ໄລຍະຍາວ, ໄລຍະກາງ ແລະ ໄລຍະສັ້ນ ຊຶ່ງແຜນດັ່ງກ່າວ ຕ້ອງໄດ້ຜ່ານ ການຮັບຮອງເອົາ ໂດຍ ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ.

ມາດຕາ 6 : **ການກຳນົດ ຂອບເຂດ ເນື້ອທີ່ ປ່າໄມ້ບ້ານ**

ເນື້ອທີ່ປ່າໄມ້ບ້ານ ຂອງ ແຕ່ລະປະເພດປ່າ ຕ້ອງໃຫ້ມີ ເຄື່ອງໝາຍ ຕາມ ທຳມະຊາດ, ຫຼັກໝາຍເຂດແດນ ທີ່ແໜ້ນໜາ, ປ້າຍ ຫຼື ເຄື່ອງໝາຍອື່ນໆ ທີ່ສະແດງໃຫ້ເຫັນ ແນວເຂດແດນຂອງແຕ່ລະປະເພດປ່າ ຢ່າງຈະແຈ້ງ ເພື່ອຫລີກເວັ້ນ ຄວາມເຂົ້າໃຈຜິດ ຫລື ການລ່ວງລະເມີດຕ່າງໆ ໃນ ການບຸກລຸກທຳລາຍປ່າ ເຊັ່ນ : ປ່າປ້ອງກັນ ແລະ ປ່າຜະລິດເປັນຕົ້ນ.

## <u>ໝວດທີ 3</u>
## ກຳມະສິດ ແລະ ຜົນປະໂຫຍດ ໃນ ການຄຸ້ມຄອງ, ປົກປັກຮັກສາ ປ່າໄມ້ ແລະ ທີ່ດິນປ່າໄມ້ບ້ານ

<u>ມາດຕາ 7</u> : **ກຳມະສິດ ໃນ ການຄຸ້ມຄອງ ປ່າໄມ້**

7.1 ໄມ້ ແລະ ເຄື່ອງປ່າຂອງດົງ ທຳມະຊາດ ທີ່ລັດມອບໃຫ້ບ້ານ ເປັນຜູ້ຄຸ້ມຄອງນັ້ນ ຍັງແມ່ນກຳມະສິດ ຂອງວົງຄະນະຍາດ ແຫ່ງຊາດ, ລັດບໍ່ອະນຸຍາດ ໃຫ້ບຸກຄົນ ແລະ ການຈັດຕັ້ງຂຸດຄົ້ນໄມ້ໃນຮູບແບບທຸລະກິດຢ່າງເດັດຂາດ. ແຕ່ອະນຸຍາດໃຫ້ ຄອບຄົວປະຊາຊົນ ພາຍໃນບ້ານ ຂຸດຄົ້ນໄມ້ ເພື່ອມາປຸກສ້າງ, ສ້ອມແປງເຮືອນຊານ ແລະໃຊ້ສອຍພາຍໃນຄອບຄົວໄດ້ ຕາມທີ່ໄດ້ ກຳນົດໄວ້ ໃນມາດຕາ 8 ຂອງລະບຽບການ ສະບັບນີ້.

7.2 ສ່ວນໄມ້ທີ່ບຸກຄົນ ແລະ ການຈັດຕັ້ງໄດ້ປູກ ແລະ ຟື້ນຟູ ດ້ວຍທຶນຮອນ ແລະ ເຫື່ອແຮງຂອງຕົນ ໂດຍມີການຮັບຮູ້ ຈາກ ລັດ ແມ່ນເປັນກຳມະສິດ ຂອງເຂົາເຈົ້າເອງ ຊຶ່ງມີສິດຄອບຄອງ, ນຳໃຊ້, ໄດ້ຮັບໝາກຜົນ, ໂອນ, ມອບ ແລະ ສືບທອດປ່າໄມ້.

7.3 ສຳລັບປະເພດເຄື່ອງປ່າ ຂອງດົງໃນປ່າທຳມະຊາດ ສາມາດເກັບກູ້ ເພື່ອເປັນສິນຄ້າ ຖ້າມີການຈັດຕັ້ງເປັນກຸ່ມ ຫຼື ສະມາຄົມ ຊຶ່ງມີລະບຽບການຄຸ້ມຄອງ ແລະ ແຜນການຈັດສັນແບບຍືນນານ ໂດຍການອະນຸມັດ ຂອງຫົວໜ້າ ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ ແລະ ຖືກຮັບຮູ້ ຈາກເຈົ້າເມືອງ.

ມາດຕາ 8 : **ຜົນປະໂຫຍດ ຈາກ ການປົກປັກຮັກສາ, ຄຸ້ມຄອງປ່າໄມ້ ແລະ ທີ່ດິນປ່າໄມ້ບ້ານ**

8.1 ບຸກຄົນ ແລະ ການຈັດຕັ້ງ ພາຍໃນບ້ານ ສາມາດຊົມໃຊ້ປ່າໄມ້, ທີ່ດິນປ່າໄມ້ ແລະ ຜະລິດຕະຜົນປ່າໄມ້ ຕາມປະເພນີ ຂອງບ້ານ ເຊັ່ນ: ຕັດໄມ້ປະເພດບໍ່ຫວງຫ້າມໃນເຂດປ່າຜະລິດ

ຂອງບ້ານ ມາເຮັດຮົ້ວ, ເຮັດຟືນ, ສຳລັບສ້ອມແປງ ແລະ ປຸກສ້າງເຮືອນຊານ ຊຶ່ງບໍລິມາດ ບໍ່ເກີນ 5 ແມັດກ້ອນໄມ້ທ່ອນ ຕໍ່ໜຶ່ງຄອບຄົວ ທີ່ມີຄວາມຈຳເປັນ ແລະ ສາມາດເກັບກູ້ເຄື່ອງ ປ່າ ຂອງດົງ ໃນປ່າທຳມະຊາດ ເພື່ອເປັນສິນຄ້າ ເຊັ່ນ: ເຫັດ, ໜໍ່ໄມ້, ເຄືອແຫມ, ຂີ້ຊີ, ຄັ່ງ, ໝາກແໜ່ງ, ໝາກຕາວ, ໝາກຈອງບາງ ແລະ ອື່ນໆ ແນໃສ່ການສ້າງລາຍຮັບເພີ່ມໃຫ້ ແກ່ຄອບຄົວ. ແຕ່ຕ້ອງປະຕິບັດ ຕາມມາດຕາ 22 ກ່ຽວກັບ ບັນດາຂໍ້ຫ້າມໃນການດຳເນີນ ການຂຸດຄົ້ນ ແລະ ເກັບກູ້ ຜະລິດຕະພັນປ່າໄມ້ ທີ່ໄດ້ລະບຸໄວ້ ໃນລະບຽບການ ວ່າດ້ວຍ ການຄຸ້ມຄອງ ການຂຸດຄົ້ນໄມ້ ແລະ ຜະລິດຕະພັນປ່າໄມ້ ສະບັບເລກທີ 0221/ກປ.2000, ລົງວັນທີ13/10/2000 ຢ່າງເຂັ້ມງວດ.

8.2 ສ່ວນ ການສ້ອມແປງ ແລະ ປຸກສ້າງໂຮງຮຽນ,ໂຮງໝໍ, ວັດວາອາລາມ ແລະ ສ ະຖານທີ່ ສາທາລະນະປະໂຫຍດ ອື່ນໆ ພາຍໃນບ້ານ, ຫົວໜ້າຫ້ອງການ ກະສິກຳ ແລະ ປ່າໄມ້ ເມືອງ ຕ້ອງໄດ້ພິຈາລະນາ ເປັນກໍລະນີພິເສດ ກ່ຽວກັບ ການອະນຸມັດ ບໍລິມາດໄມ້ ໂດຍ ອີງໃສ່ສະພາບຄວາມເປັນຈິງຂອງແຕ່ລະສະຖານທີ່ໆຈຳເປັນ ເພື່ອຜົນປະໂຫຍດສ່ວນລວມ.

8.3 ບຸກຄົນ ແລະ ການຈັດຕັ້ງ ພາຍໃນບ້ານ ສາມາດນຳໃຊ້ ທີ່ດິນປ່າໄມ້ຊຸດໂຊມ, ເນື້ອທີ່ດິນ ເປົ່າຫວ່າງ ຫຼື ທີ່ດິນປອກໂລ້ນ ໃນເຂດປ່າໄມ້ບ້ານ ຕາມຄວາມອາດສາມາດທາງດ້ານ ແຮງງານ ແລະ ທຶນຮອນ ເພື່ອ ປູກໄມ້ ແລະ ການຜະລິດ ກະສິກຳ - ປ່າໄມ້ແບບປະສົມ ປະສານ ໃນເນື້ອທີ່ບໍ່ເກີນ 3 ເຮັກຕາ ຕໍ່ ໜຶ່ງແຮງງານໃນຄອບຄົວ.

## ໝວດທີ 4

## ການກຳນົດ ສິດ ແລະ ໜ້າທີ່ ໃນການຄຸ້ມຄອງ ແລະ ຈັດສັນ ປ່າໄມ້ບ້ານ

### ມາດຕາ 9: ສິດ ແລະ ໜ້າທີ່ ຂອງ ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ

9.1 ສົມທົບ ໜ່ວຍງານປ່າໄມ້ບ້ານ ແລະ ອຳນາດການປົກຄອງບ້ານ ເພື່ອນຳພາ ປະຊາຊົນ ແລະ ອົງການຈັດຕັ້ງມະຫາຊົນຂັ້ນບ້ານດຳເນີນການກຳນົດເຂດປ່າໄມ້ບ້ານ,ການສຳຫລວດ ເພື່ອຈັດສັນ ປ່າໄມ້, ການຄຸ້ມຄອງ, ການນຳໃຊ້ປ່າໄມ້ ແລະ ເຄື່ອງປ່າຂອງດົງ ໃຫ້ສອດຄ່ອງ ກັບ ລະບຽບການ ແລະ ຄຳແນະນຳ ດ້ານ ເຕັກນິກວິຊາການ ແລະ ສະພາບຕົວຈິງ.

9.2 ສົມທົບ ໜ່ວຍງານປ່າໄມ້ບ້ານ ແລະ ອຳນາດການປົກຄອງບ້ານ ເພື່ອປຸກລະດົມ, ຊຸກຍູ້ ແລະ ສົ່ງເສີມ ຢ່າງເປັນເຈົ້າການ ໃຫ້ປະຊາຊົນ ບັນດາເຜົ່າ ທີ່ຢູ່ພາຍໃນ ບ້ານຕົນເອງ ໃຫ້ ເຂົ້າຮ່ວມ ໃນ ການຈັດສັນ ປ່າໄມ້ ຢ່າງແຂງແຮງ.

9.3 ສົມທົບ ໜ່ວຍງານປ່າໄມ້ບ້ານ ແລະ ອຳນາດການປົກຄອງບ້ານ ເພື່ອດຳເນີນ ການຊຸກຍູ້,

ເອື້ອອຳນວຍ,ຄຸ້ມຄອງ,ກວດກາ ຕິດຕາມ ເກັບກຳສະພາບການປ່ຽນແປງ ຂອງປ່າໄມ້ ແລະ ການເຄື່ອນໄຫວ ວຽກງານປ່າໄມ້ ລວມທັງ ສະກັດກັ້ນ ທຸກການກະທຳ ທີ່ເປັນ ການທຳລາຍ ຊັບພະຍາກອນປ່າໄມ້ ຢ່າງທັນການ.

9.4 ຝຶກອົບຮົມ ດ້ານ ວິຊາຊີບ ຂັ້ນພື້ນຖານ ໃຫ້ແກ່ ປະຊາຊົນ ເນັ້ນໜັກ ຂອດສຳຫລວດ ແລະ ວາງແຜນຄຸ້ມຄອງ ແລະ ຈັດສັນປ່າໄມ້ບ້ານ ເພື່ອປູກ, ຟື້ນຟູປ່າ, ປົກປັກຮັກສາ ປ່າໄມ້ບ້ານ.

## ມາດຕາ 10: ສິດ ແລະ ໜ້າທີ່ ຂອງ ອຳນາດການປົກຄອງບ້ານ

10.1 ໂຄສະນາເຜີຍແຜ່ ແລະ ສຶກສາອົບຮົມ ໃຫ້ ປະຊາຊົນ ເຂົ້າໃຈ ແລະ ເຊື່ອມຊຶມ ຕໍ່ ກົດໝາຍ ປ່າໄມ້, ມະຕິ, ຄຳສັ່ງຕ່າງໆ ກ່ຽວກັບ ວຽກງານປ່າໄມ້ ແລະ ຄວາມໝາຍສຳຄັນ ຂອງປ່າໄມ້ ຢ່າງເລິກເຊິ່ງ.

10.2 ອະນຸມັດ ລະບຽບການສະເພາະ ໃນການຄຸ້ມຄອງ ປ່າໄມ້ບ້ານ ທີ່ໜ່ວຍງານປ່າໄມ້ບ້ານ ສ້າງຂຶ້ນ ໃຫ້ ຖືກຕ້ອງສອດຄ່ອງ ກັບ ສະພາບການຕົວຈິງ ໂດຍ ມີ ຄວາມເປັນເອກະພາບ ກັນ ພາຍໃນບ້ານ.

10.3 ຈັດຕັ້ງ ປະຊາຊົນ ແລະ ອົງການຈັດຕັ້ງມະຫາຊົນ ຂັ້ນບ້ານ ທີ່ມີ ຢູ່ໃນບ້ານນັ້ນ ໂດຍແບ່ງ ຄວາມຮັບຜິດຊອບກັນ ຢ່າງລະອຽດ ເພື່ອເຮັດໜ້າທີ່ ຄຸ້ມຄອງ ປ່າໄມ້ບ້ານ ໃນຂອບເຂດ ບ້ານຂອງຕົນ ໃຫ້ມີປະສິດທິຜົນ.

## ມາດຕາ 11 : ສິດ ແລະ ໜ້າທີ່ ຂອງໜ່ວຍງານປ່າໄມ້ບ້ານ

11.1 ເປັນ ເສນາທິການໃຫ້ ຄະນະກຳມະການ ເສດຖະກິດ ແລະ ອຳນາດ ການປົກຄອງບ້ານ ເພື່ອ ສ້າງລະບຽບການສະເພາະ ໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້, ແຫຼ່ງນ້ຳ, ສັດນ້ຳ, ສັດປ່າ ແລະ ສິ່ງແວດລ້ອມທຳມະຊາດ ພາຍໃນ ປ່າໄມ້ບ້ານ ໃຫ້ ສອດຄ່ອງ ກັບສະພາບ ຕົວຈິງ ຂອງ ແຕ່ລະ ປະເພດປ່າ.

11.2 ຈັດຕັ້ງປະຕິບັດ ມະຕິຄຳສັ່ງ ຂອງເມືອງ, ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ ແລະ ອຳນາດການປົກຄອງບ້ານ ກ່ຽວກັບ ການປົກປັກຮັກສາ ແລະ ຄຸ້ມຄອງປ່າໄມ້, ທີ່ດິນປ່າໄມ້ ແລະ ກິດຈະການ ປ່າໄມ້ບ້ານ ຢ່າງເຂັ້ມງວດ.

11.3 ສົມທົບ ກັບຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ເພື່ອ ສ້າງແຜນການຈັດສັນ ແລະ ຄຸ້ມຄອງປ່າໄມ້ບ້ານ ຕາມແຕ່ລະປະເພດປ່າເປັນແຕ່ລະໄລຍະ ໃຫ້ສອດຄ່ອງ ກັບແຜນງານ ແລະ ໂຄງການພັດທະນາເສດຖະກິດ-ສັງຄົມຕ່າງໆ.

11.4 ສະເໜີ ສ້າງຕັ້ງກຸ່ມ ຫຼື ສະມາຄົມ ຜູ້ນຳໃຊ້ ຊັບພະຍາກອນປ່າໄມ້ ເພື່ອດຳເນີນ ກິດຈະການ ປ່າໄມ້ ພາຍໃນຂອບເຂດ ປ່າໄມ້ບ້ານ ເຊັ່ນ : ການເກັບກູ້ ເຄື່ອງປ່າຂອງດົງ, ການປູກໄມ້, ການບົວລະບັດຮັກສາ, ການຟື້ນຟູປ່າໄມ້ ແລະ ອື່ນໆ ບົນພື້ນຖານ ຢູ່ໃຕ້ການຄຸ້ມຄອງ ທາງດ້ານ ລະບຽບຂອງບ້ານ.

11.5 ຄຸ້ມຄອງ, ປົກປັກຮັກສາ, ປ້ອງກັນ ແລະ ຟື້ນຟູສະພາບປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໃຫ້ມີຄວາມສົມດູນ ທາງດ້ານລະບົບນິເວດ ຕະຫຼອດຮອດ ການໃຊ້ປະໂຫຍດ ໄດ້ຢ່າງຍືນນານ.

11.6 ລາດຕະເວນ, ຕິດຕາມ ແລະ ກວດກາ ການດຳເນີນງານ ກ່ຽວກັບ ກິດຈະການຕ່າງໆ ໃນປ່າໄມ້ບ້ານ ເຊັ່ນ : ສະກັດກັ້ນການລ່າເນື້ອ, ການຊື້-ຂາຍສັດນ້ຳ ແລະ ສັດປ່າ ທີ່ບໍ່ຖືກຕ້ອງຕາມລະບຽບການ, ການຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ, ການປຸງແຕ່ງ, ການປູກ, ການຟື້ນຟູບູລະນະ ແລະ ການບົວລະບັດຮັກສາປ່າໄມ້ບ້ານ.

11.7 ຕ້ານ ການເຄື່ອນໄຫວ ອັນບໍ່ດີ ທີ່ມີຜົນກະທົບ ຕໍ່ຊັບພະຍາກອນປ່າໄມ້, ແຫຼ່ງນ້ຳ ແລະ ສິ່ງແວດລ້ອມ.

11.8 ໄກ່ເກ່ຍ ສຶກສາອົບຮົມ ເມື່ອບຸກຄົນ ແລະ ການຈັດຕັ້ງ ເກີດມີຄວາມ ຂັດແຍ່ງ ໃນການດຳເນີນ ກິດຈະການ ແລະ ການໃຊ້ປະໂຫຍດ ຈາກປ່າໄມ້ບ້ານ.

11.9 ສັ່ງຢຸດຊົ່ວຄາວ, ສຶກສາອົບຮົມ, ຢຶດຂອງກາງ, ປັບໄໝ ແລະກັກຕົວຜູ້ກະທຳຜິດ ຕໍ່ລະບຽບການ ວ່າດ້ວຍ ການຄຸ້ມຄອງປ່າໄມ້ບ້ານ ແລະ ລະບຽບການ ທີ່ກ່ຽວຂ້ອງອື່ນໆ ນຳສົ່ງໃຫ້ອຳນາດການປົກຄອງບ້ານ ດຳເນີນ ຄະດີ ຕາມລະບຽບກົດໝາຍ.

11.10 ບັນທຶກ ລາຍງານ ການຄຸ້ມຄອງ ແລະ ການດຳເນີນ ກິດຈະການ ປ່າໄມ້ບ້ານ ຕາມສິດ ແລະໜ້າທີ່ ຂອງຕົນ ເພື່ອເປັນປະໂຫຍດ ໃນການວາງແຜນ ແລະ ການຕິດຕາມ, ກວດກາ, ປະເມີນຜົນ ຂອງຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ.

11.11 ເປັນເຈົ້າການ ນຳພາປະຊາຊົນ ແລະ ການຈັດຕັ້ງ ພາຍໃນບ້ານ ຕ້ານ ແລະ ສະກັດກັ້ນໄຟໄໝ້ປ່າ ຢ່າງທັນການ ພ້ອມທັງວາງມາດຕະການທີ່ຈຳເປັນ ເພື່ອປ້ອງກັນບໍ່ໃຫ້ໄຟໄໝ້ປ່າ.

11.12 ມີສ່ວນຮ່ວມ ໃນການປຶກສາ ຫາລື ແລະ ເປັນເອກະພາບກັນກັບພາກສ່ວນກ່ຽວຂ້ອງຕ່າງໆ ໃນການກຳນົດທິດທາງ ແລະແຜນພັດທະນາເສດຖະກິດສັງຄົມຂອງບ້ານ.

## ມາດຕາ 12 : ສິດ ແລະ ໜ້າທີ່ ຂອງປະຊາຊົນ ແລະ ການຈັດຕັ້ງ ພາຍໃນບ້ານ

12.1. ຊ່ວຍໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ຂອງບ້ານ ທີ່ມີຢູ່ ບໍ່ໃຫ້ຫຼຸດໜ້ອຍຖອຍລົງ ແລະ ໃຫ້ ມີຄວາມອຸດົມສົມບູນ ຕະຫລອດໄປ.

12.2. ເປັນເຈົ້າການ ໃນການຕ້ານ ກັບການເຄື່ອນໄຫວ ຂອງກຸ່ມຄົນບໍ່ດີ ທີ່ກໍ່ຜົນເສັຍຫາຍ ຕໍ່ຊັບພະຍາກອນປ່າໄມ້ ເຊັ່ນ:ການຕັດໄມ້,ເລື່ອຍໄມ້,ຖາງປ່າ,ຈູດປ່າ, ຫາສັດນ້ຳ, ລ່າສັດປ່າ ປະເພດຫວງຫ້າມ ແລະ ສະກັດກັ້ນ ທຸກການກະທຳ ທີ່ເປັນ ການທຳລາຍ ຊັບພະຍາກອນປ່າໄມ້ ຂອງບ້ານ.

12.3. ເມື່ອເຫັນກຸ່ມຄົນບໍ່ດີ ສ້າງຄວາມເສັຍຫາຍ ຕໍ່ຊັບພະຍາກອນປ່າໄມ້ ຕ້ອງຮີບຮ້ອນລາຍງານໃຫ້ໜ່ວຍງານປ່າໄມ້ບ້ານ ແລະ ອຳນາດການປົກຄອງບ້ານ ເພື່ອພ້ອມກັນສະກັດກັ້ນໃຫ້ໄດ້ຢ່າງທັນການ.

12.4. ເປັນເຈົ້າການ ປົກປັກຮັກສາ, ຟື້ນຟູບູລະນະ ແລະ ປູກຂະຫຍາຍປ່າ ໃນຂອບເຂດ ບ້ານຂອງຕົນ ພ້ອມທັງ ເປັນເຈົ້າການ ສະກັດກັ້ນ ແລະ ດັບມອດໄຟໄໝ້ປ່າ ໃນຂອບເຂດປ່າໄມ້ບ້ານ ຢ່າງພ້ອມພຽງ ແລະ ທັນການ.

## ມາດຕາ 13 : ບັນດາຂໍ້ຫ້າມ ໃນ ຂອບເຂດ ປ່າໄມ້ບ້ານ

13.1. ບຸກຄົນ ແລະ ການຈັດຕັ້ງເຂົ້າຈັບຈ່ອງ, ມອບໂອນ ແລະ ຊື້-ຂາຍ ເນື້ອທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ບ້ານ.

13.2. ປຸກສ້າງ, ຖາງ, ຈູດ, ຕັດໄມ້, ເກັບກູ້ ເຄື່ອງປ່າຂອງດົງ ແລະ ລ່າສັດປ່າທີ່ຫວງຫ້າມ ຫຼື ການກະທຳ ອື່ນໆ ໂດຍບໍ່ໄດ້ຮັບອະນຸຍາດ ຊຶ່ງຈະເຮັດໃຫ້ຊັບພະຍາກອນປ່າໄມ້ ແລະ ສິ່ງແວດລ້ອມຂອງບ້ານ ເຊື່ອມເສຍ.

13.3. ນຳເອົາ ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແລກປ່ຽນ ກັບ ວັດຖຸ, ສິ່ງຂອງ ຫຼື ກິດຈະການກໍ່ສ້າງຕ່າງໆ ເພື່ອມາເປັນ ສາທາລະນະປະໂຫຍດ ຫຼື ຊັບສົມບັດຂອງບ້ານ.

13.4. ຂຸດຄົ້ນໄມ້ ປະເພດຄຸ້ມຄອງ ເພື່ອມາປຸກສ້າງ, ສ້ອມແປງ ແລະ ໃຊ້ສອຍ ໃນ ຄອບຄົວ ເກີນ 5 ແມັດກ້ອນໄມ້ທ່ອນ ຕໍ່ໜຶ່ງຄອບຄົວ ທີ່ມີຄວາມຈຳເປັນ ຕາມທີ່ໄດ້ລະບຸໄວ້ ໃນມາດຕາ 28 ຂອງກົດໝາຍປ່າໄມ້.

13.5. ຂຸດຄົ້ນໄມ້ ປະເພດຫວງຫ້າມ, ຂຸດຄົ້ນໄມ້ ເພື່ອເປັນສິນຄ້າ ແລະ ແລກປ່ຽນ ຕາມ ຂໍ້13.3 ໃນຂອບເຂດ ທີ່ໄດ້ກຳນົດ ໃຫ້ເປັນ ປ່າໄມ້ບ້ານ. ເວັ້ນເສຍແຕ່ໄດ້ຮັບ ອະນຸຍາດພິເສດ ຈາກລັດຖະບານເທົ່ານັ້ນ.

13.6. ຂຸດຄົ້ນ ເຄື່ອງປ່າຂອງດົງ, ຫາສັດນ້ຳ ແລະ ລ່າສັດປ່າ ທີ່ບໍ່ຫວງຫ້າມ ແບບລັກສະນະດັບສູນ.

13.7. ບຸກຄົນ ແລະ ການຈັດຕັ້ງ ເຄື່ອນຍ້າຍ, ປ່ຽນແປງ ຫຼື ທຳລາຍ ຫຼັກເຂດ, ປ້າຍ ຫຼື ເຄື່ອງໝາຍອື່ນໆ ທີ່ໄດ້ສ້າງຂຶ້ນ ໃນ ຂອບເຂດ ປ່າໄມ້ບ້ານ.

13.8. ຫັນປ່ຽນ ເນື້ອທີ່ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ລັດມອບໝາຍໃຫ້ ໂດຍບໍ່ໄດ້ຮັບອະນຸຍາດ ຈາກອົງການ ທີ່ມີສິດໜ້າທີ່ ໃນການຕົກລົງ ກ່ຽວກັບການຫັນປ່ຽນປ່າໄມ້ ແລະ ທີ່ດິນປ່າໄມ້.

13.9. ບຸກຄົນ ແລະ ການຈັດຕັ້ງ ພາຍໃນບ້ານ ຈັບຈອງ ຫຼື ນຳໃຊ້ປ່າໄມ້ທຳມະຊາດ ທີ່ດົກໜາ ຫລື ປ່າເຫລົ່າ ທີ່ມີຄວາມສາມາດເຕີບໃຫ່ຍ ຂະຫຍາຍຕົວ ເປັນປ່າທຳມະຊາດ ດ້ວຍມັນເອງນັ້ນ ເພື່ອປູກໄມ້ ເປັນຂອງຕົນ ຢ່າງເດັດຂາດ.

## ໝວດທີ 5
## ພັນທະ, ນະໂຍບາຍ ຕໍ່ຜູ້ມີຜົນງານ ແລະ ມາດຕະການ ຕໍ່ຜູ້ລະເມີດ

### ມາດຕາ 14 : ພັນທະ ຕໍ່ ວຽກງານ ປ່າໄມ້ບ້ານ

ບຸກຄົນ ແລະ ການຈັດຕັ້ງ ພາຍໃນບ້ານ ລ້ວນແຕ່ມີ ພັນທະ ໃນການປົກປັກຮັກສາ ແລະ ພັດທະນາປ່າໄມ້, ຊັບພະຍາກອນປ່າໄມ້, ທີ່ດິນປ່າໄມ້, ແຫຼ່ງນ້ຳ, ສັດນ້ຳ, ສັດປ່າ ແລະ ສິ່ງແວດລ້ອມ ໃຫ້ອຸດົມສົມບູນ ຕະຫລອດໄປ, ນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ບ້ານ ທີ່ໄດ້ກຳນົດໃຫ້ ຖືກຕ້ອງ ຕາມລະບຽບການ, ບໍ່ເຮັດໃຫ້ປ່າໄມ້ບ້ານ ເຊື່ອມໂຊມ, ບົກແຫ້ງ, ວາງມາດຕະການອັນຈຳເປັນ ເພື່ອປ້ອງກັນ ໄຟໄໝ້ປ່າ ພ້ອມທັງ ປະກອບສ່ວນ ຢ່າງແຂງແຮງເຂົ້າໃນ ການສະກັດກັ້ນ ການທຳລາຍ ຊັບພະຍາກອນປ່າໄມ້ ດ້ວຍທຸກຮູບການ.

### ມາດຕາ 15 : ນະໂຍບາຍ ຕໍ່ຜູ້ມີຜົນງານ

15.1. ບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານ ດີເດັ່ນ ໃນ ການປະກອບສ່ວນ ເຮັດໃຫ້ ການຈັດຕັ້ງປະຕິບັດ ວຽກງານ ປ່າໄມ້ບ້ານ ມີ ປະສິດທິຜົນສູງ, ຖືກຕ້ອງ ຕາມ ສັນຍາ, ແຜນການ ແລະ ລະບຽບການ ຈະໄດ້ຮັບ ການຍ້ອງຍໍ ແລະ ນະໂຍບາຍຕ່າງໆ ຈາກ ອົງການຈັດຕັ້ງ ຂອງ ລັດ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງອື່ນໆ ຕາມ ຄວາມເໝາະສົມ.

15.2. ບຸກຄົນ ທີ່ໄດ້ຮັບ ເຄາະຮ້າຍ ຈາກ ການປະຕິບັດໜ້າທີ່ ໃນ ການເຄື່ອນໄຫວວຽກງານ ປ່າໄມ້ບ້ານ ຕ້ອງໄດ້ຮັບ ການເອົາໃຈໃສ່ເບິ່ງແຍງດູແລ ຜູ້ກ່ຽວ ແລະ ຄອບຄົວ ຢ່າງສົມເຫດສົມຜົນ

ມາດຕາ 16 : ມາດຕະການ ຕໍ່ຜູ້ລະເມີດ

ບຸກຄົນ ແລະ ການຈັດຕັ້ງ ທີ່ຝືນຕໍ່ລະບຽບການ ວ່າດ້ວຍການ ຄຸ້ມຄອງ ປ່າໄມ້ບ້ານ ແລະ ຂັດຂວາງ ການດຳເນີນງານ ຂອງ ໜ່ວຍງານປ່າໄມ້ບ້ານ ຈະຖືກຕັກເຕືອນ, ສຶກສາອົບຮົມ, ປະຕິບັດ ລະບຽບວິໄນ ແລະ ກັກຕົວ ສົ່ງໃຫ້ອຳນາດການປົກຄອງ ດຳເນີນຄະດີ ຕາມ ລະບຽບ ກົດໝາຍ.

## ໝວດທີ 6
## ບົດບັນຍັດ ສຸດທ້າຍ

ມາດຕາ 17 : ການຈັດຕັ້ງປະຕິບັດ

17.1. ມອບໃຫ້ ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ, ແລະ ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ ປະສານສົມທົບກັນ ກັບອຳນາດການປົກຄອງບ້ານ, ຄະນະກຳມະການເສດຖະກິດບ້ານ ເຜີຍແຜ່ ແລະ ຈັດຕັ້ງປະຕິບັດລະບຽບການ ສະບັບນີ້ ຕາມພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງຕົນຢ່າງເຂັ້ມງວດ.

17.2 ບັນດາສຳນັກງານ ອົງການ ຂອງລັດ ແລະ ທຸກພາກສ່ວນເສດຖະກິດ ລວມທັງບຸກຄົນ ແລະ ການຈັດຕັ້ງ ຈົ່ງຮັບຮູ້ ແລະ ຊຸກຍູ້ ໃນການຈັດຕັ້ງປະຕິບັດ ລະບຽບການ ສະບັບນີ້ ໃຫ້ ປະກົດຜົນເປັນຈິງ.

ມາດຕາ 18 : ຜົນສັກສິດ

ລະບຽບການ ສະບັບນີ້ ໃຊ້ປ່ຽນແທນ ຂໍ້ກຳນົດ ສະບັບເລກທີ 0429 / ກປ, ລົງວັນທີ 18 ມິຖຸນາ 1992 ວ່າດ້ວຍ ສິດ ແລະ ໜ້າທີ່ ການຄຸ້ມຄອງ ຊັບພະຍາກອນປ່າໄມ້ ຢູ່ຂັ້ນບ້ານ, ບັນດາ ລະບຽບການອື່ນໆ ທີ່ປະກາດໃຊ້ ໃນເມື່ອກ່ອນ ຫາກຂັດກັບ ລະບຽບການ ສະບັບນີ້ ລ້ວນແຕ່ຖືກລົບລ້າງ. ລະບຽບການ ສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ມື້ ລົງລາຍເຊັນ ເປັນຕົ້ນໄປ.

ລັດຖະມົນຕີ ວ່າການ ກະຊວງ ກະສິກຳ ແລະ ປ່າໄມ້

